

# ໂຄງການຮ່ວມມື ILO/China ການສ້າງຄວາມເຂັ້ມແຂງ ການພັດທະນາສີມືແຮງງານ ໃນປະເທດກຳປູເຈຍ, ສປປ ລາວ ແລະ ມຽນມາ (SSTC)

ເມສາ / 2022

## ພາບລວມຂອງໂຄງການ

### ຄູ່ຮ່ວມງານ

- ປະເທດກຳປູເຈຍ: MOLVT, CAMFEBA, and trade unions
- ສປປ ລາວ: MOLSW, LNCCI, and LFTU
- ປະເທດມຽນມາ: MOLIP, UMFCCI, and CTUM

### ຜູ້ໃຫ້ທຶນ

MOHRSS, ປະເທດຈີນ

### ໄລຍະໂຄງການ

ມັງກອນ 2020-ທັນວາ 2025

### ເປົ້າໝາຍຜູ້ໄດ້ຮັບຜົນປະໂຫຍດ

- ຜູ້ໄດຮັບຜົນປະໂຫຍດໂດຍກົງ : ກະຊວງ/ໜ່ວຍງານພັດທະນາສີມືແຮງງານ ແລະ ຈັດຫາງານ, ອົງການຈັດຕັ້ງຕາງໜ້າຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ.
- ຜູ້ໄດ້ຮັບຜົນປະໂຫຍດສູງສຸດ : ຜູ້ຊອກວຽກເຮັດງານທຳ, ແຮງງານ, ຜູ້ໃຊ້ແຮງງານ ແລະ ຜູ້ໃຫການຝຶກອົບຮົມ

### ປະເທດເປົ້າໝາຍໂຄງການ

ປະເທດກຳປູເຈຍ, ສປປ ລາວ ແລະ ມຽນມາ

## ຈຸດປະສົງຂອງໂຄງການ

ຈຸດປະສົງຂອງໂຄງການເພື່ອປັບປຸງການເຂົ້າເຖິງການຈ້າງງານສຳລັບຜູ້ອອກແຮງງານ ແລະ ເພີ່ມຜົນຜະລິດຂອງວິສາຫະກິດໂດຍຜ່ານການຈັດຫາງານທີ່ມີຄຸນນະພາບທີ່ດີກ່ວາ, ການສ້າງຄວາມສາມາດໃຫກັບສະຖາບັນ ແລະ ການພັດທະນາສີມືແຮງງານ.

ໂຄງການສຸມໃສ່ສາມດ້ານຕົ້ນຕໍຄື: ການເຊື່ອມໂຍງການຝຶກວິຊາຊີບກັບຄວາມຕ້ອງການຂອງຕະຫລາດແຮງງານໃນປັດຈຸບັນ ພ້ອມທັງຄາດໝາຍການເຮັດວຽກສີຂຽວ, ພັດທະນາຂອບວຸດທິຂອງທັກສະສີມື ແລະ ມາດຕະຖານສະມັດຕະພາບ, ສ້າງຫລັກສູດໂດຍຜ່ານເຄືອຂ່າຍ ແລະ ສ້າງສາຍສຳພັນລະຫວ່າງປະເທດທີ່ໄດ້ຮັບຜົນປະໂຫຍດ, ຜູ້ໃຫ້ທຶນ, ປະເທດສະມາຊິກອາຊຽນ ແລະ ອື່ນໆ. ສົ່ງເສີມການແລກປ່ຽນຄວາມຮູ້ກ່ຽວກັບການພັດທະນາສີມືແຮງງານ, ການບໍລິການຈັດຫາງານ, ແລະ ວຽກງານສີຂຽວໂດຍຜ່ານການຮ່ວມມືໃຕ້-ໃຕ້. ໂຄງການອອກແບບເພື່ອປັບປຸງການພັດທະນາສີມືແຮງງານ, ການມີສ່ວນຮ່ວມຂອງຕະຫລາດແຮງງານ, ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມເປັນເອກະພາບ ພ້ອມທັງປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກໃນປະເທດກຳປູເຈຍ , ສປປ ລາວ ແລະ ມຽນມາ. ຍ້ອນສະພາບຂອງໂລກ ແລະ ຄວາມກ້າວໜ້າທາງດ້ານເຕັກໂນໂລຊີໄດ້ເຮັດໃຫຄວາມຕ້ອງການສີມືແຮງງານຂອງວິສາຫະກິດມີການປ່ຽນແປງຢ່າງໄວວາ ແລະ ໄດ້ກົດດັນໃນການຊອກຫາແຮງງານ ແລະ ກຳລັງແຮງງານທີ່ມີຄຸນວຸດທິທີ່ເໝາະສົມ. ສະນັ້ນການປັບປຸງຄຸນນະພາບຂອງການບໍລິການຈັດຫາງານໂດຍຜ່ານການສ້າງຄວາມເຂັ້ມແຂງ, ການປະຖົມນິເທດ (ໃຫຄວາມຮູ້ເບື້ອງຕົ້ນ) ກັບຈຸດບໍລິການຈັດຫາງານ ແລະ ຫ້ອງການ ແລະ ປັບປຸງ ການວິເຄາະຂໍ້ມູນຂອງຕະຫລາດແຮງງານໃຫ້ມີຄຸນນະພາບເພີ່ມຂຶ້ນຈຶ່ງເປັນອົງປະກອບທີ່ສຳຄັນຫລັກຂອງໂຄງການ. ວິທີການ ແລະ ເຄື່ອງມືສຳລັບການສ້າງຂີດຄວາມສາມາດທີ່ເໝາະສົມຈະໄດຮັບການພັດທະນາຮ່ວມກັນກັບຄູ່ຮ່ວມງານສາມຝ່າຍ.

ໂຄງການດັ່ງກ່າວຈະຖືກຈັດຕັ້ງປະຕິບັດພາຍໃຕ້ແຜນງານການຮ່ວມມື ILO - China. ການສະໜັບສະໜູນ ຂອງປະເທດຈີນຈະລວມເອົາຂໍ້ກຳນົດກ່ຽວກັບແຫຼ່ງທຶນ ແລະ ລິເລີ່ມການແລກປ່ຽນຄວາມຮູ້ຢ່າງກວ້າງຂວາງ ໂດຍອີງໃສປະສົບການໃນລະດັບທ້ອງຖິ່ນ ແລະ ລະດັບປະເທດ. ການຮ່ວມມືຫຼັກໆແມ່ນການຊ່ວຍເຫຼືອດ້ານເຕັກນິກວິຊາການ, ການໃຫຄຳປຶກສາ ແລະ ການແລກປ່ຽນ ການປະຕິບັດງານທີ່ດີ. ພ້ອມນັ້ນການໃຫຄຳແນະນຳຈາກຊ່ຽວຊານຂອງ ILO ແລະ ການແລກປ່ຽນກໍລະນີສຶກສາຕົວຈິງຈາກພາກພື້ນອາຊີ ແລະ ປາຊີຟິກ ແລະ ພາກພື້ນອື່ນໆ,ໂຄງການຍັງມີຈຸດປະສົງເພື່ອປະກອບສ່ວນເຂົ້າໃນການພັດທະນາສີມືແຮງງານ ແລະ ຕະຫລາດແຮງງານເພື່ອຊ່ວຍໃຫເສດຖະກິດຂະຫຍາຍໂຕ, ຄວາມກ້າວໜ້າຂອງສັງຄົມ ແລະ ວຽກໃນປະຈຸບັນພາຍໄຕ້ວາລະການເຊື່ອມໂຍງເສດຖະກິດພາກພື້ນໃນອາຊຽນ.



## ກິດຈະກຳຫລັກ

ການພັດທະນາສີມືແຮງງານ ແລະ ການບໍລິການຈັດຫາງານມີບົດບາດສຳຄັນໃນວຽກງານທີ່ມີຄຸນຄ່າ ແລະ ເປັນທຳ. ຍຸດທະສາດຂອງໂຄງການລວມມີສອງດ້ານໂດຍສຸມໃສກິດຈະກຳດັ່ງຕໍ່ໄປນີ້:

- ສ້າງຄວາມເຂັ້ມແຂງໃນການພັດທະນາສີມືແຮງງານ ແລະ ການສ້າງນະໂຍບາຍຂອງການບໍລິການຈັດຫາງານ, ລວມທັງຄຸນວຸດທິ ແລະ ມາດຕະຖານສະມັດຕະພາບ, ແຜນງານການຈັດຫາງານ ແລະ ອື່ນໆ.
- ການສ້າງຄວາມສາມາດໃຫ້ສະຖາບັນ ລວມມີສູນຝຶກອົບຮົມ, ໂຮງຮຽນອາຊີວະສຶກສາ,ຄູຝຶກສະໜອງການບໍລິການທີ່ມີຄຸນນະພາບ ປັບປຸງການເກັບກຳຂໍ້ມູນຂອງຕະຫລາດແຮງງານ, ວິເຄາະ ແລະ ເຜີຍແຜ່ການບໍລິການທີ່ດີກວາໃຫ້ກັບຜູ້ຊອກວຽກເຮັດງານທຳ ແລະ ວິສາຫະກິດ ເພື່ອແກ້ໄຂຄວາມຕ້ອງການຂອງໄວໜຸ່ມ, ແມຍິງ, ແຮງງານເຄື່ອນຍ້າຍ ແລະ ຄົນພິການ.

## ຜົນໄດ້ຮັບຂອງໂຄງການ

ຍົກສູງຄຸນນະພາບຂອງການຝຶກອົບຮົມສີມືແຮງງານ ແລະ ການບໍລິການຈັດຫາງານທີ່ຢູ່ໃນຄວາມຮັບຜິດຊອບຂອງກະຊວງ / ໜ່ວຍງານ ແລະ ການສ້າງຄວາມເຂັ້ມແຂງໃນການໃຫຂໍ້ມູນເບື້ອງຕົ້ນກັບຜູ້ເຂົ້າມາໃຊ້ບໍລິການໃນເຄືອຂ່າຍຂອງສະຖາບັນຝຶກວິຊາຊີບ ແລະ ຈຸດບໍລິການຈັດຫາງານ.

- ການພັດທະນາຂອບວຸດທິຂອງທັກສະສີມື ແລະ ມາດຕະຖານສະມັດຕະພາບ;
- ການພັດທະນາຫລັກສູດຝຶກວິຊາຊີບຕາມຂະແໜ່ງ;
- ສ້າງຕັ້ງເຄືອຂ່າຍຂອງສະຖາບັນ /ພັນທະມິດການຝຶກວິຊາຊີບ;
- ສົ່ງເສີມຂໍ້ມູນດ້ານທັກສະສີມື ແລະ ການແຂ່ງຂັນສີມືແຮງງານ ໃນອາຊຽນ ແລະ ສາກົນ;
- ພັດທະນາເຄື່ອງມືການບໍລິການຈັດຫາງານເພື່ອນຳໃຊ້ໃນຈຸດບໍລິການຈັດຫາງານລວມມີ ການຝຶກອົບຮົມໃຫຄວາມຮູ້ການຄຸ້ມຄອງຄອມພິວເຕີ ແລະ ຖານຂໍ້ມູນ .
- ພັດທະນາຊຸດຂໍ້ມູນການສື່ສານໃຫບຸກຄົນທົ່ວໄປ, ອີງການຕາງໜ້າຜູ້ໃຊ້ແຮງງານ ແລະ ກຳມະບານກຽວກັບການຈັດຫາງານ ແລະ ຈຸດບໍລິການຈັດຫາງານ.
- ເອກະສານອ້າງອີງເພື່ອແລກປ່ຽນການປະຕິບັດທີ່ດີໂດຍການຮວມມືສາມຝ່າຍກັບປະເທດຈີນ ແລະ ປະເທດທີ່ເປັນສະມາຊິກປະຊາຄົມອາຊຽນ.




ລາຍລະອຽດຕິດຕໍ່:
ທ່ານ ນາງ ແກ້ວວັນໄລ ພັນທະວົງ
ຜູ້ປະສານງານ ໂຄງການ ILO-China
ILO/China Programme on Strengthening Skills Development in Cambodia, Lao PDR and Myanmar through South-South and Triangular cooperation (SSTC)

ໂທ : +856 2059161911
E: phanthavong@ilo.org
ilo.org/chinaprogramme